ບໍລິສັດ ດັກລັກ ຣັບເບີ ຈຳກັດ

**DAKLAORUCO**

## ບັນຊີຊົນເຜົ່າໃນເຂດໂຄງການຂອງ ບໍລິສັດ ດັກລັກ ຣັບເບີ ຈຳກັດ

| ລດ | ຊົນເຜົ່າ | ພາສາ | | ສາດສະໜາ/ການເຊື່ອຖື | ປະເພນີດ້ານການປູກຝັງ | ເອກະລັກການນຸ່ງຖື | ຮີດຄອງປະເພນີ | ວິທີການເຂົ້າເຖິງຮັບປະກັນເຂົ້າຄວາມສອດຄ່ອງກັບວັດທະນະທຳຊົນເຜົ່າ | ວິທີການເຂົ້າເຖິງ ສຳພາດ |
|---|---|---|---|---|---|---|---|---|---|
| | | ພາສາເວົ້າ | ພາສາຂຽນ | | | | | | |
| I | ລາວລຸ່ມ | ພາສາລາວ | ພາສາລາວ | ພຸດ | ເຮັດນາ, ເຮັດໄຮ່ | ເອກະລັກເຄື່ອງນຸ່ງປະຈຳຊົນເຜົ່າທີ່ນຸ່ງເນື່ອງໃນໂອກາດທີ່ສຳຄັນ ເຊັ່ນ: ບຸນປີໃໝ່, ງານແຕ່ງງານ, ແລະ ງານບຸນຕ່າງໆ.<br>- ຜູ້ຍິງນຸ່ງສິ້ນໃໝ, ເສື້ອໃໝ, ເກົ້າຜົມ ບ່ຽງແພ. ຜູ້ຊາຍນຸ່ງ ຜ້າສະຫຼົ້ງ, ເສື້ອໃໝແຂນຍາວທີ່ມີສີສັນແຕກຕ່າງກັນຂຶ້ນກັບແຕ່ລະງານ.<br>ໃນພິທີແຕ່ງງານ, ເຈົ້າບ່າວແລະເຈົ້າສາວຈະໃສ່ສີສົດໃສ,ໃສ່ເຄື່ອງປະດັບດ້ວຍຄຳ, ໃນງານແຕ່ງແຂກທີ່ມາຮ່ວມຈະນຸ່ງຊຸດທີ່ມີສີສັນສົດໃສແຕກຕ່າງກັນ | ບຸນປະເພນີ ຫຼື ເອີ້ນວ່າ ບຸນ, ໝາຍຄວາມວ່າໃຫ້ພອນໃຫ້ໂຊກລາບ, ພາຍໃນປີໜຶ່ງຈະມີຫຼາຍງານບຸນປະເພນີແຕກຕ່າງກັນ. ແຕ່ຈະຍົກຂຶ້ນບຸນປະເພນີຈຳນວນໜຶ່ງຄືດັ່ງນີ້:<br>- ບຸນປີໃໝ່ລາວ ຫຼືເອີ້ນວ່າບຸນຫົດນໍ້າ ຈັດຂຶ້ນລະຫວ່າງວັນທີ 13-16 ເດືອນເມສາ ຂອງແຕ່ລະປີ. ສຳລັບຄົນລາວເຊື່ອກັນວ່າການຫົດສົງພະແລະຫົດສົງເຊິ່ງກັນແລະກັນຈະນຳມາເຊິ່ງຄວາມໂຊກດີ, ຄວາມຊຸ່ມເຢັນ, ຄວາມຜາສຸກ, ຄວາມອີ່ມໜຳສຳລານ….<br>- ບຸນບັ້ງໄຟ: ຈັດຂຶ້ນເດືອນ 6 ລາວໃນແຕ່ລະປີ. ແຕ່ລະບ້ານຈະຈັດບຸນຕາມຄວາມພ້ອມຂອງບ້ານແຕ່ຕ້ອງຈັດພາຍໃນເດືອນ 6 ລາວ. ການຈັດບຸນດັ່ງກ່າວແມ່ນມີຄວາມເຊື່ອຖືກັນວ່າງານບຸນຂໍຝົນໃຫ້ຕົກຕາມລະດູ.<br>- ບຸນເຂົ້າພັນສາ: ບຸນດັ່ງກ່າວກົງກັບວັນທີ 15 ຄໍ່າ ເດືອນ 8 ລາວ ຂອງທຸກໆປີ ມີໄລຍະ 3 | - ບັນດາງານບຸນປະເພນີ: ບໍລິສັດຮັບປະກັນການເຄົາລົບສິດຂອງປະຊາຊົນທ້ອງຖິ່ນ, ເປັນຕົ້ນແມ່ນ:<br>+ ບຸນປີໃໝ່ລາວ: ບໍລິສັດໃຫ້ຜູ້ອອກແຮງງານພັກ 3 ວັນ.<br>+ ງານບຸນບຸນບັ້ງໄຟ ເພື່ອຂໍຝົນ: ບໍລິສັດໃຫ້ຜູ້ອອກແຮງງານພັກ 1 ວັນ ສະເພາະວັນບຸນ.<br>+ ບຸນເຂົ້າພັນສາ: ບໍລິສັດໃຫ້ຜູ້ອອກແຮງງານພັກ 1 ວັນ.<br>+ ບຸນອອກພັນສາ: ບໍລິສັດໃຫ້ຜູ້ອອກແຮງງານພັກ 1 ວັນ.<br>- ສາສະໜາ ແລະ ການເຊື່ອຖື: ບໍລິສັດໄດ້ເຜີຍແຜ່ໃຫ້ບັນດາພະນັກງານກຳມະກອນທັງໝົດ (ຊາວຫວຽດນາມ) ຮັບຮູ້ ແລະ ນັບຖືຄວາມເຊື່ອທາງສາສະ | - ສຳພາດໂດຍຮູບແບບສິ່ງເອກະສານສອບຖາມກັບຜູ້ຕາງໜ້າອຳນາດການປົກຄອງທ້ອງຖິ່ນ;<br>- ສຳພາດໂດຍກົງຫຼືສິ່ງເອກະສານສອບຖາມກັບອົງການຈັດຕັ້ງຮັບຜະດຊອບວັດທະນະທຳ,ຂໍ້ມູນຂ່າວສານທ້ອງຖິ່ນ;<br>- ແລກປ່ຽນ, ສຳພາດໂດຍກົງກັບຜູ້ຕາງໜ້າອຳນາດການປົກຄອງບ້ານ.<br>- ແລກປ່ຽນໂດຍກົງກັບເຖົ້າແກ່ແນວໂຮມບ້ານ;<br>- ສຳພາດມີການຄັດເລືອກເອົາຕົວແທນບັນດາເຜົ່າພື້ນເມືອງທີ່ເປັນຜູ້ອອກແຮງງານລາວ ໃນບໍລິສັດ;<br>- ປະສານສົມທົບໂຄສະນາໃນກອງປະຊຸມເພື່ອເຜີຍແຜ່ນະໂຍບາຍຂອງທ້ອງຖິ່ນ |

| ລດ | ຊົນເຜົ່າ | ພາສາ | | ສາດສະໜາ/ການເຊື່ອຖື | ປະເພນີດ້ານການປູກຝັງ | ເອກະລັກການນຸ່ງຖື | ຮີດຄອງປະເພນີ | ວິທີການເຂົ້າເຖິງຮັບປະກັນເຂົ້າຄວາມສອດຄ່ອງກັບວັດທະນະທຳຊົນເຜົ່າ | ວິທີການເຂົ້າເຖິງ ສຳພາດ |
|---|---|---|---|---|---|---|---|---|---|
| | | ພາສາເວົ້າ | ພາສາຂຽນ | | | | | | |
| | | | | | | | ເດືອນ. ຊາວພຸດຈະພາກັນໄປວັດໃສ່ບາດຢາດນ້ຳ.ຈຸດປະສົງຂອງບຸນແມ່ນເພື່ອຂໍໃຫ້ໂຊກລາບ,ສຸຂະພາບແຂງແຮງ,ປະເທດມີຄວາມສະຫງົບສຸກແລະພືດພັນງອກງາມ.ໃນໄລຍະເຂົ້າພັນສາຈະບໍ່ໄດ້ຈັດງານບຸນຕ່າງໆ, ບໍ່ຈັດງານແຕ່ງງານ, ບໍ່ປຸກເຮືອນໃໝ່, ບາງຄົນຈະຄະລຳເຫຼົ້າເບຍ; ພຣະພິກຂຸສົງ ຕ້ອງຢູ່ປະຈຳ ທີ່ວັດໃດໜຶ່ງ ໃນຊ່ວງລະດູຝົນ ໂດຍບໍ່ໄປແຮມຄືນ ຫຼື ຄ້າງຄືນບ່ອນອື່ນ. ເຖິງວ່າຈະເປັນເດືອນທີ່ຄະລຳ,ແຕ່ກິດຈະກຳສັງຄົມຍັງດຳເນີນໄປເປັນປົກກະຕິ.<br>- ບຸນຊ່ວງເຮືອ (ອອກພັນສາ): ກົງກັບວັນທີ 15 ຄ່ຳເດືອນ 11 ລາວ.ງານບຸນຊ່ວງເຮືອຖືວ່າເປັນທັງໂອກາດເພື່ອຄວາມມ່ວນຊື່ນ ແລະ ໄດ້ຮັບໂຊກລາບ. | ໜາຂອງຊາວທ້ອງຖິ່ນ.(ກົດລະບຽບສະບັບເລກທີ 15/ລບ-ບສ, ລົງວັນທີ 10/07/2023 ວ່າດ້ວຍການເຄົາລົບສິດຂອງຊຸມຊົນໃນພື້ນທີ່ທີ່ບໍລິສັດດຳເນີນກິດຈະການ)<br>ໃຫ້ພະນັກງານ ກຳມະກອນຂອງບໍລິສັດ. ພ້ອມກັນນັ້ນຍັງໄດ້ລົງໃນເວັບໄຊເປັນ 2 ພາສາຄື: ລາວ ແລະ ຫວຽດນາມ.<br>- ຮີດຄອງປະເພນີການປູກຝັງ: ບໍລິສັດຮັບປະກັນຈະບໍ່ລະເມີດຫຼືມີຂໍ້ຂັດແຍ່ງກ່ຽວກັບທີ່ດິນ ແລະ ໄຮ່ນາຂອງປະຊາຊົນທ້ອງຖິ່ນ ແລະບໍ່ສິ່ງຜົນກະທົບຕໍ່ການເຄື່ອນໄຫວປູກຝັງຂອງເຂົາເຈົ້າ. (ກົດລະບຽບສະບັບເລກທີ 19/ລບ-ບສ, ລົງວັນທີ 08/04/2023 ກົດລະບຽບວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງລະຫວ່າງບໍລິສັດ ກັບ ຊຸມຊົນທ້ອງຖິ່ນ)<br>- ເຄື່ອງນຸ່ງປະຈຳຊົ່ນເຜົ່າ:<br>+ ເວລາເຮັດວຽກຢູ່ບໍລິສັດ: ຮຽກຮ້ອງໃຫ້ຜູ້ອອກແຮງງານໃສ່ຊຸດປ້ອງກັນແຮງງານຕາມລະບຽບການ,ຮັບປະກັນຄວາມປອດໄພໃນເວລາເຮັດວຽກ. | |

| ລດ | ຊົນເຜົ່າ | ພາສາ | | ສາດສະໜາ/ການເຊື່ອຖື | ປະເພນີດ້ານການປູກຝັງ | ເອກະລັກການນຸ່ງຖື | ຮີດຄອງປະເພນີ | ວິທີການເຂົ້າເຖິງຮັບປະກັນເຂົ້າຄວາມສອດຄ່ອງກັບວັດທະນະທຳຊົນເຜົ່າ | ວິທີການເຂົ້າເຖິງ ສຳພາດ |
|---|---|---|---|---|---|---|---|---|---|
| | | ພາສາເວົ້າ | ພາສາຂຽນ | | | | | | |
| | | | | | | | | + ນອກເວລາເຮັດວຽກ: ບໍລິສັດເຄົາລົບເຄື່ອງນຸ່ງປະຈຳຊົ່ນເຜົ່າຂອງຊາວທ້ອງຖິ່ນ. | |
| II | ລາວເທີງ | | | | | | | | |
| 1 | ອາລັກ | ພາສາອາລັກ | ພາສາລາວ | ຜີ | ເຮັດໄຮ່ | - ຜູ້ຊາຍແມ່ນນຸ່ງກະຕ່ຽວ, ເກົ້າຜົມນ້ອຍໄວ້ທາງງ່ອນ, ຫົ່ມເສື້ອແຂນສັ້ນສີຂາວຫຼືສີດຳ, ບ່ອງຫູໃສ່ດອກໄມ້.<br>- ຜູ້ຍິງນຸ່ງສິ້ນລາຍດອກໄມ້ແລະສິ້ນກ່ານ, ຫົ່ມເສື້ອແຂນສັ້ນຫຼືແຂນຍາວລາຍແຊກທີ່ຍ້ອມເອງຕາມຄວາມຕ້ອງການ. ເອົາໝາກປັດນ້ອຍໃສ່ຄໍ, ກ້ອງແຂນເງິນ, ຕ້າງຫູເງິນ. | - ບຸນປະເພນີ ແມ່ນບຸນກິນຄວາຍປະຈຳປີໃນທຸກໆປີກຳນົດເອົາເດືອນ 3 ນອກນີ້ຍັງມີບຸນເຈັຍ ແມ່ນຈັດຂຶ້ນໃນເດືອນ 10 ກ່ອນຈະຮູດເຂົ້າຂອງທຸກໆປີ ຈາກນີ້ຍັງມີບຸນນ້ອຍເຊັ່ນວ່າກິນຄວາຍແຕ່ລະເຮືອນ. ໃນປະຈຸບັນນີ້ຮີດກິນຄວາຍແມ່ນປ່ຽນມາກິນໝູ ແລະໄກ່.<br>- ການຄະລຳບ້ານ ໃນເມື່ອກ່ອນແມ່ນເຮັດຮີດ, ເຮັດບຸນບ້ານ, ເຮັດບຸນເຮືອນແມ່ນຄະລຳ 03 ມື້ 03 ຄືນ ຄົນໃນບ້ານບໍ່ໄດ້ອອກຫາກິນຫຼືໄປຢາມພີ່ນ້ອງ ສ່ວນແຂກແມ່ນເຂົ້າອອກໄດ້, ແຕ່ວ່າບໍ່ໄດ້ນອນຄ້າງຄືນ.<br>- ວິທີການຄະລຳ ແມ່ນປັກຫຼັກຢູ່ທາງເຂົ້າບ້ານເຮັດໄມ້ເປັນ 3 ແງ່ມໝາຍວ່າ 3 ວັນ. ຖ້າມີຄົນຕາຍຢູ່ນອກບ້ານຈະແມ່ນຕາຍຫງູຫຼືຕາຍອື່ນໆກໍຕາມແມ່ນເອົາເຂົ້າບ້ານບໍ່ໄດ້. ຖ້າແຂກ | - ງານບຸນປະເພນີ: ບໍລິສັດຮັບປະກັນການເຄົາລົບສິດຂອງປະຊາຊົນທ້ອງຖິ່ນ, ເປັນຕົ້ນແມ່ນ:<br>+ ບຸນບ້ານ: ບໍລິສັດໃຫ້ຜູ້ອອກແຮງງານພັກ 3 ວັນ.<br>+ ຮີດຄວາຍຂອງຊົ່ນເຜົ່າ: ບໍລິສັດໃຫ້ຜູ້ອອກແຮງງານພັກ 1 ວັນ.<br>- ການຄະລຳບ້ານ: ບໍລິສັດໄດ້ເຜີຍແຜ່ໃຫ້ບັນດາພະນັກງານກຳມະກອນທັງໝົດ (ຊາວຫວຽດນາມ) ຮັບຮູ້, ນັບຖືຄວາມແລະປະຕິບັດຕາມຮີດຂອງບ້ານ. (ກົດລະບຽບສະບັບເລກທີ 15/ລບ-ບສ, ລົງວັນທີ 10/07/2023 ວ່າດ້ວຍການເຄົາລົບສິດຂອງຊຸມຊົນໃນພື້ນທີ່ທີ່ບໍລິສັດດຳເນີນກິດຈະການ).<br>- ຮີດຄອງປະເພນີການປູກຝັງ: ບໍລິສັດຮັບປະກັນຈະບໍ່ລະເມີດຫຼືມີຂໍ້ຂັດແຍ່ງ | - ສຳພາດໂດຍຮູບແບບສິ່ງເອກະສານສອບຖາມກັບຜູ້ຕາງໜ້າອຳນາດການປົກຄອງທ້ອງຖິ່ນ;<br>- ສຳພາດໂດຍກົງຫຼືສິ່ງເອກະສານສອບຖາມກັບອົງການຈັດຕັ້ງຮັບຜະດຊອບວັດທະນະທຳ,ຂໍ້ມູນຂ່າວສານທ້ອງຖິ່ນ;<br>- ແລກປ່ຽນ, ສຳພາດໂດຍກົງກັບຜູ້ຕາງໜ້າອຳນາດການປົກຄອງບ້ານ.<br>- ແລກປ່ຽນໂດຍກົງກັບເຖົ້າແກ່ແນວໂຮມບ້ານ;<br>- ສຳພາດມີການຄັດເລືອກເອົາຕົວແທນບັນດາເຜົ່າພື້ນເມືອງທີ່ເປັນຜູ້ອອກແຮງງານລາວ ໃນບໍລິສັດ;<br>- ປະສານສົມທົບໂຄສະນາໃນກອງປະຊຸມເພື່ອເຜີຍແຜ່ນະໂຍບາຍຂອງທ້ອງຖິ່ນ |

| ລດ | ຊົນເຜົ່າ | ພາສາ | | ສາດສະໜາ/ການເຊື່ອຖື | ປະເພນີດ້ານການປູກຝັງ | ເອກະລັກການນຸ່ງຖື | ຮີດຄອງປະເພນີ | ວິທີການເຂົ້າເຖິງຮັບປະກັນເຂົ້າຄວາມສອດຄ່ອງກັບວັດທະນະທຳຊົນເຜົ່າ | ວິທີການເຂົ້າເຖິງ ສຳພາດ |
|---|---|---|---|---|---|---|---|---|---|
| | | ພາສາເວົ້າ | ພາສາຂຽນ | | | | | | |
| | | | | | | | ມາຕາຍຢູ່ບ້ານຫຼືເກີດລູກແມ່ນຈະໄດ້ແປງຮີດຄືກິນຄວາຍ 01 ໂຕ. | ກ່ຽວກັບທີ່ດິນ ແລະ ໄຮ່ນາຂອງປະຊາຊົນທ້ອງຖິ່ນ ແລະບໍ່ສິ່ງຜົນກະທົບຕໍ່ການເຄື່ອນໄຫວປູກຝັງຂອງເຂົາເຈົ້າ. (ກົດລະບຽບສະບັບເລກທີ 19/ລບ-ບສ, ລົງວັນທີ 08/04/2023).<br>- ເຄື່ອງນຸ່ງປະຈຳຊົ່ນເຜົ່າ:<br>+ ເວລາເຮັດວຽກຢູ່ບໍລິສັດ: ຮຽກຮ້ອງໃຫ້ຜູ້ອອກແຮງງານໃສ່ຊຸດປ້ອງກັນແຮງງານຕາມລະບຽບການ,ຮັບປະກັນຄວາມປອດໄພໃນເວລາເຮັດວຽກ.<br>+ ນອກເວລາເຮັດວຽກ: ບໍລິສັດເຄົາລົບເຄື່ອງນຸ່ງປະຈຳຊົ່ນເຜົ່າຂອງຊາວທ້ອງຖິ່ນ. | |
| 2 | ລະເວນ | ພາສາລະເວນ | ພາສາລາວ | ຜີ | ເຮັດໄຮ່ | - ຜູ້ຊາຍນຸ້ງໂສ້ງຂາກົບ, ໂສ້ງຂາຍາວເສື້ອຝ້າຍຍ້ອມຄາມຫຼືໝາກເຂືອກ.<br>- ຜູ້ຍິງນຸ່ງສິ້ນລາຍດອກໄມ້, ຫົ່ມເສື້ອແຂນສັ້ນຫຼືຍາວມີລາກຫຼາຍສີສັນ. | - ການຄະລຳບ້ານ: ເອົາຝົດໄມ້ປັກອັດທາງແລະຢັ່ງຝ້າຍປົກຕະແລ່ວເຂົ້າບ້ານເພາະບໍ່ໃຫ້ແຂກເຂົ້າບ້ານ.ເວລາບູຊາອາຮັກບ້ານຖ້າມີການລະເມີດແມ່ນຈະຖືກປັບໄໝ ຄວາຍ 01 ໂຕ.<br>- ບຸນປະເພນີເຮັດບຸນຕາມປະເພນີຂອງສາສະໜາພຸດຄື: ບຸນບັ້ງໄຟ, ບັນກັນຖົນ ແລະ ບຸນພະເວດ 3-4 ປີເຮັດເທື່ອໜຶ່ງ. | - ການຄະລຳບ້ານ: ບໍລິສັດໄດ້ເຜີຍແຜ່ໃຫ້ບັນດາພະນັກງານກຳມະກອນທັງໝົດ (ຊາວຫວຽດນາມ) ຮັບຮູ້, ນັບຖືຄວາມແລະປະຕິບັດຕາມຮີດຂອງບ້ານ. (ກົດລະບຽບສະບັບເລກທີ 15/ລບ-ບສ, ລົງວັນທີ 10/07/2023).<br>- ຮີດຄອງປະເພນີການປູກຝັງ: ບໍລິສັດຮັບປະກັນຈະບໍ່ລະເມີດຫຼືມີຂໍ້ຂັດແຍ່ງກ່ຽວກັບທີ່ດິນ ແລະ ໄຮ່ນາຂອງປະຊາ | ສຳພາດໂດຍຮູບແບບສິ່ງເອກະສານສອບຖາມກັບຜູ້ຕາງໜ້າອຳນາດການປົກຄອງທ້ອງຖິ່ນ;<br>- ສຳພາດໂດຍກົງຫຼືສິ່ງເອກະສານສອບຖາມກັບອົງການຈັດຕັ້ງຮັບຜະດຊອບວັດທະນະທຳ,ຂໍ້ມູນຂ່າວສານທ້ອງຖິ່ນ;<br>- ແລກປ່ຽນ, ສຳພາດໂດຍກົງກັບຜູ້ຕາງໜ້າອຳນາດການປົກຄອງບ້ານ. |

| ລດ | ຊົນເຜົ່າ | ພາສາ | | ສາດສະໜາ /ການເຊື່ອຖື | ປະເພນີດ້ານການປູກຝັງ | ເອກະລັກການນຸ່ງຖື | ຮີດຄອງປະເພນີ | ວິທີການເຂົ້າເຖິງຮັບປະກັນເຂົ້າຄວາມສອດຄ່ອງກັບວັດທະນະທຳຊົນເຜົ່າ | ວິທີການເຂົ້າເຖິງ ສຳພາດ |
|---|---|---|---|---|---|---|---|---|---|
| | | ພາສາເວົ້າ | ພາສາຂຽນ | | | | | | |
| | | | | | | | | ຊົນທ້ອງຖິ່ນ ແລະ ບໍ່ສົ່ງຜົນກະທົບຕໍ່ການເຄື່ອນໄຫວປູກຝັງຂອງເຂົາເຈົ້າ. (ກົດລະບຽບສະບັບເລກທີ 19/ລບ-ບສ, ລົງວັນທີ 08/04/2023).<br>- ເຄື່ອງນຸ່ງປະຈຳຊົ່ນເຜົ່າ:<br>+ ເວລາເຮັດວຽກຢູ່ບໍລິສັດ: ຮຽກຮ້ອງໃຫ້ຜູ້ອອກແຮງງານໃສ່ຊຸດປ້ອງກັນແຮງງານຕາມລະບຽບການ,ຮັບປະກັນຄວາມປອດໄພໃນເວລາເຮັດວຽກ.<br>+ ນອກເວລາເຮັດວຽກ: ບໍລິສັດເຄົາລົບເຄື່ອງນຸ່ງປະຈຳຊົ່ນເຜົ່າຂອງຊາວທ້ອງຖິ່ນ. | - ແລກປ່ຽນໂດຍກົງກັບເຖົ້າແກ່ແນວໂຮມບ້ານ;<br>- ສຳພາດມີການຄັດເລືອກເອົາຕົວແທນບັນດາເຜົ່າພື້ນເມືອງທີ່ເປັນຜູ້ອອກແຮງງານລາວ ໃນບໍລິສັດ;<br>- ປະສານສົມທົບໂຄສະນາໃນກອງປະຊຸມເພື່ອເຜີຍແຜ່ນະໂຍບາຍຂອງທ້ອງຖິ່ນ |
| 3 | ຕະໂອ້ຍ | ພາສາຕະໂອ້ຍ | ພາສາລາວ | ຜີ | ເຮັດໄຮ່ | - ຜູ້ຊາຍສ່ອດກະຕ່ຽວແພຂາວຢ່າງດຽວບໍ່ທັນມີເສື້ອແຂະແລະເສື້ອດັ່ງປະຈຸບັນເທື່ອ,ຊາຍບາງຄົນເອົາເປືອກປໍຫູ, ປໍຊາມາຕຸ້ມຫົ່ມປົກຫຼັງບັງເອິກ, ຊາຍຈົ່ງຜົມຍາວເງ່ອນສຽບແຂ້ວໝູ, ຫູໃສ່ຕ້າງເງິນຊື້ນຫເປັນຫຼອດຍາວ.<br>- ຜູ້ຍິງມີພຽງສິ້ນສີດຳນຸ່ງຮັດເອິກ, ຫົ່ມເສື້ອແຂະຜືນດຳ, ເກົ້າຜົມ, | - ບຸນປະເພນີ:<br>+ ບຸນສະເຫຼີມສະຫຼອງຜົນເກັບກ່ຽວເຂົ້າຂຶ້ນເລົ້າແລະເລີ່ມເອົາເຂົ້າໃນເລົ້າອອກມາຕຳກິນ.<br>+ ບຸນເດືອນ 3 ເອນ 4 ເປັນປະເພນີການບູຊາໃນແຕ່ລະປີ ແລະກິນຄວາຍ 1-2 ໂຕ.<br>- ການຄະລຳບ້ານ: ເຂົາເຈົ້າເອົາໄມ້ດິບ (ຂຽວ) ສັກອັດທາງແລະໄມ້ກາດອັດພ້ອມເພື່ບໍ່ໃຫ້ແຂກເຂົ້າບ້ານເປັນເວລາ 03 ມື້ 03 ຄືນ. | - ງານບຸນ : ບໍລິສັດໃຫ້ຜູ້ອອກແຮງງານພັກ 1 ວັນ ສະເພາະວັນບຸນ.<br>- ການຄະລຳບ້ານ: ບໍລິສັດ ໃຫ້ຜູ້ອອກແຮງງານທ້ອງຖິ່ນພັກ 3 ວັນ ແລະ ບໍລິສັດໄດ້ເຜີຍແຜ່ໃຫ້ບັນດາພະນັກງານກຳມະກອນທັງໝົດ (ຊາວຫວຽດນາມ) ຮັບຮູ້, ນັບຖືຄວາມແລະປະຕິບັດຕາມຮີດຂອງບ້ານ. (ກົດລະບຽບສະບັບເລກທີ 15/ລບ-ບສ, ລົງວັນທີ 10/07/2023). | - ສຳພາດໂດຍຮູບແບບສິ່ງເອກະສານສອບຖາມກັບຜູ້ຕາງໜ້າອຳນາດການປົກຄອງທ້ອງຖິ່ນ;<br>- ສຳພາດໂດຍກົງຫຼືສິ່ງເອກະສານສອບຖາມກັບອົງການຈັດຕັ້ງຮັບຜະດຊອບວັດທະນະທຳ,ຂໍ້ມູນຂ່າວສານທ້ອງຖິ່ນ;<br>- ແລກປ່ຽນ, ສຳພາດໂດຍກົງກັບຜູ້ຕາງໜ້າອຳນາດການປົກຄອງບ້ານ. |

| ລດ | ຊົນເຜົ່າ | ພາສາ | | ສາດສະໜາ/ການເຊື່ອຖື | ປະເພນີດ້ານການປູກຝັງ | ເອກະລັກການນຸ່ງຖື | ຮີດຄອງປະເພນີ | ວິທີການເຂົ້າເຖິງຮັບປະກັນເຂົ້າຄວາມສອດຄ່ອງກັບວັດທະນະທຳຊົນເຜົ່າ | ວິທີການເຂົ້າເຖິງ ສຳພາດ |
|---|---|---|---|---|---|---|---|---|---|
| | | ພາສາເວົ້າ | ພາສາຂຽນ | | | | | | |
| | | | | | | ໃສ່ຕ້າງຫູເງິນກ່ຽວມັນແລະໝາກ ປັດສີແດງ, ຂາວແລະສີຟ້າໃສ່ຄໍ ໃນແຂນກໍມີປອກແຂນເງິນ, ທອງທັງ 2 ເບື້ອງ. | | - ຮີດຄອງປະເພນີການປູກຝັງ: ບໍລິສັດຮັບປະກັນຈະບໍ່ລະເມີດຫຼືມີຂໍ້ຂັດແຍ່ງກ່ຽວກັບທີ່ດິນ ແລະ ໄຮ່ນາຂອງປະຊາຊົນທ້ອງຖິ່ນ ແລະ ບໍ່ສົ່ງຜົນກະທົບຕໍ່ການເຄື່ອນໄຫວປູກຝັງຂອງເຂົາເຈົ້າ. (ກົດລະບຽບສະບັບເລກທີ 19/ລບ-ບສ, ລົງວັນທີ 08/04/2023).<br>- ເຄື່ອງນຸ່ງປະຈຳຊົ່ນເຜົ່າ:<br>+ ເວລາເຮັດວຽກຢູ່ບໍລິສັດ: ຮຽກຮ້ອງໃຫ້ຜູ້ອອກແຮງງານໃສ່ຊຸດປ້ອງກັນແຮງງານຕາມລະບຽບການ,ຮັບປະກັນຄວາມປອດໄພໃນເວລາເຮັດວຽກ.<br>+ ນອກເວລາເຮັດວຽກ: ບໍລິສັດເຄົາລົບເຄື່ອງນຸ່ງປະຈຳຊົ່ນເຜົ່າຂອງຊາວທ້ອງຖິ່ນ. | - ແລກປ່ຽນໂດຍກົງກັບເຖົ້າແກ່ແນວໂຮມບ້ານ;<br>- ສຳພາດມີການຄັດເລືອກເອົາຕົວແທນບັນດາເຜົ່າພື້ນເມືອງທີ່ເປັນຜູ້ອອກແຮງງານລາວ ໃນບໍລິສັດ;<br>- ປະສານສົມທົບໂຄສະນາໃນກອງປະຊຸມເພື່ອເຜີຍແຜ່ນະໂຍບາຍຂອງທ້ອງຖິ່ນ. |
| 4 | ຊ່ວຍ | ພາສາຊ່ວຍ | ພາສາລາວ | ພຸດ | ເຮັດໄຮ່ | - ຜູ້ຊາຍນຸ່ງຜ້າສະຫຼົ້ງ, ໂສ້ງຂາກົບ ສັກຂາລາຍແຂນລາຍ, ຕັດຜົມສັ້ນ, ສັກໄມ້ຄັນເທົ້າແພເຂົ້າມາຄ້ຽນແອວ, ຫົ່ມເສື້ອແຂນສັ້ນຫຼືເສື້ອຍ້ອມໝາກເກືອ. | ບຸນປະເພນີຕ່າງໆແມ່ນຈັດຄືຊົ່ນເຜົ່າລາວລຸ່ມ | - ບັນດາງານບຸນປະເພນີ: ບໍລິສັດຮັບປະກັນການເຄົາລົບສິດຂອງປະຊາຊົນທ້ອງຖິ່ນ, ເປັນຕົ້ນແມ່ນ:<br>+ ບຸນປີໃໝ່ລາວ: ບໍລິສັດໃຫ້ຜູ້ອອກແຮງງານພັກ 3 ວັນ. | - ສຳພາດໂດຍຮູບແບບສົ່ງເອກະສານສອບຖາມກັບຜູ້ຕາງໜ້າອຳນາດການປົກຄອງທ້ອງຖິ່ນ;<br>- ສຳພາດໂດຍກົງຫຼືສົ່ງເອກະສານສອບຖາມກັບອົງການຈັດຕັ້ງຮັບຜະດຊອບວັດທະນະທຳ,ຂໍ້ມູນຂ່າວສານທ້ອງຖິ່ນ; |

| ລດ | ຊົນເຜົ່າ | ພາສາ | | ສາດສະໜາ/ການເຊື່ອຖື | ປະເພນີດ້ານການປູກຝັງ | ເອກະລັກການນຸ່ງຖື | ຮີດຄອງປະເພນີ | ວິທີການເຂົ້າເຖິງຮັບປະກັນເຂົ້າຄວາມສອດຄ່ອງກັບວັດທະນະທຳຊົນເຜົ່າ | ວິທີການເຂົ້າເຖິງ ສຳພາດ |
|---|---|---|---|---|---|---|---|---|---|
| | | ພາສາເວົ້າ | ພາສາຂຽນ | | | | | | |
| | | | | | | - ຜູ້ຍິງແມ່ນນຸ່ງສິ້ນດຳຫຼືສິ້ນໄໝມ້ອນ, ຫົ່ມເສື້ອດຳໝາກເກືອເສື້ອຂາວແຂນສັ້ນ, ເກົ້າຜົມ, ໃສ່ຕ້າງຫູຄຳຕ່ອງແຕ່ງຫຼືຕ້າງຫູເງິນ-ທອງ, ນິ້ວມືມີແຫວນໃສ່. | | + ງານບຸນບຸນບັ້ງໄຟ ເພື່ອຂໍຝົນ: ບໍລິສັດໃຫ້ຜູ້ອອກແຮງງານພັກ 1 ວັນ ສະເພາະວັນບຸນ.<br>+ ບຸນເຂົ້າພັນສາ: ບໍລິສັດໃຫ້ຜູ້ອອກແຮງງານພັກ 1 ວັນ.<br>+ ບຸນອອກພັນສາ: ບໍລິສັດໃຫ້ຜູ້ອອກແຮງງານພັກ 1 ວັນ.<br>- ສາສະໜາ ແລະ ການເຊື່ອຖື: ບໍລິສັດໄດ້ເຜີຍແຜ່ໃຫ້ບັນດາພະນັກງານກຳມະກອນທັງໝົດ (ຊາວຫວຽດນາມ) ຮັບຮູ້ ແລະ ນັບຖືຄວາມເຊື່ອທາງສາສະໜາຂອງຊາວທ້ອງຖິ່ນ.(ກົດລະບຽບສະບັບເລກທີ 15/ລບ-ບສ, ລົງວັນທີ 10/07/2023 ວ່າດ້ວຍການເຄົາລົບສິດຂອງຊຸມຊົນໃນພື້ນທີ່ທີ່ບໍລິສັດດຳເນີນກິດຈະການ)ໃຫ້ພະນັກງານ ກຳມະກອນຂອງບໍລິສັດ. ພ້ອມກັນນັ້ນຍັງໄດ້ລົງໃນເວັບໄຊເປັນ 2 ພາສາຄື: ລາວ ແລະ ຫວຽດນາມ.<br>- ຮີດຄອງປະເພນີການປູກຝັງ: ບໍລິສັດຮັບປະກັນຈະບໍ່ລະເມີດຫຼືມີຂໍ້ຂັດແຍ່ງກ່ຽວກັບທີ່ດິນ ແລະ ໄຮ່ນາຂອງປະຊາຊົນທ້ອງຖິ່ນ ແລະ ບໍ່ສົ່ງຜົນກະທົບຕໍ່ | - ແລກປ່ຽນ, ສຳພາດໂດຍກົງກັບຜູ້ຕາງໜ້າອຳນາດການປົກຄອງບ້ານ.<br>- ແລກປ່ຽນໂດຍກົງກັບເຖົ້າແກ່ແນວໂຮມບ້ານ;<br>- ສຳພາດມີການຄັດເລືອກເອົາຕົວແທນບັນດາເຜົ່າພື້ນເມືອງທີ່ເປັນຜູ້ອອກແຮງງານລາວ ໃນບໍລິສັດ;<br>- ປະສານສົມທົບໂຄສະນາໃນກອງປະຊຸມເພື່ອເຜີຍແຜ່ນະໂຍບາຍຂອງທ້ອງຖິ່ນ. |

| ລດ | ຊົນເຜົ່າ | ພາສາ | | ສາດສະໜາ/ການເຊື່ອຖື | ປະເພນີດ້ານການປູກຝັງ | ເອກະລັກການນຸ່ງຖື | ຮີດຄອງປະເພນີ | ວິທີການເຂົ້າເຖິງຮັບປະກັນເຂົ້າຄວາມສອດຄ່ອງກັບວັດທະນະທຳຊົນເຜົ່າ | ວິທີການເຂົ້າເຖິງ ສຳພາດ |
|---|---|---|---|---|---|---|---|---|---|
| | | ພາສາເວົ້າ | ພາສາຂຽນ | | | | | | |
| | | | | | | | | ການເຄື່ອນໄຫວປູກຝັງຂອງເຂົາເຈົ້າ. (ກົດລະບຽບສະບັບເລກທີ 19/ລບ-ບສ, ລົງວັນທີ 08/04/2023). | |
| 5 | ແຈະ | ພາສາແຈະ | ພາສາລາວ | ຜີ | ເຮັດໄຮ່ | - ຜູ້ຊາຍນຸ່ງໂສ້ງຂາໃຫ່ຍ, ເສື້ອແຂນຍາວສີຂາວ, ໃສ່ຜ້າບ່ຽງ ຫຼືນຸ່ງຜ້າສະຫຼົ້ງມີລາຍດອກໄມ້ແລະຫົ່ມເສື້ອລາຍດອກໄມ້ແລະໃສ່ແພພັນຫົວ.<br>- ຜູ້ຍິງນຸ່ງສິ້ນມີລາຍດອກໄມ້ສີແດງ, ເສື້ອແຂນຍາວສີມືດ, ໃສ່ຜ້າບ່ຽງ ແລະໃສ່ແພພັນຫົວ. | - ການຄະລຳບ້ານ: ເອົາຟົດໄມ້ຕັດທາງເຂົ້າບ້ານ. ສຳລັບຄົວເຮືອນແມ່ນເອົາຟົດໄມ້ໄວ້ເທິງຫົວຂັ້ນໄດ.<br>- ບຸນປະເພນີ:<br>+ ບຸນສະເຫຼີມສະຫຼອງຜົນເກັບກ່ຽວເຂົ້າຂຶ້ນເລົ້າ ແລະເລີ່ມເອົາເຂົ້າໃນເລົ້າອອກມາຕຳກິນ.<br>+ ງານບຸນຕ່າງໆ ແມ່ນຈັດຄືຊົ່ນເຜົ່າລາວລຸ່ມ | - ບັນດາງານບຸນປະເພນີ: ບໍລິສັດຮັບປະກັນການເຄົາລົບສິດຂອງປະຊາຊົນທ້ອງຖິ່ນ, ເປັນຕົ້ນແມ່ນ:<br>+ ບຸນປີໃໝ່ລາວ: ບໍລິສັດໃຫ້ຜູ້ອອກແຮງງານພັກ 3 ວັນ.<br>+ ງານບຸນບຸນບັ້ງໄຟ ເພື່ອຂໍຝົນ: ບໍລິສັດໃຫ້ຜູ້ອອກແຮງງານພັກ 1 ວັນ ສະເພາະວັນບຸນ.<br>+ ບຸນເຂົ້າພັນສາ: ບໍລິສັດໃຫ້ຜູ້ອອກແຮງງານພັກ 1 ວັນ.<br>+ ບຸນອອກພັນສາ: ບໍລິສັດໃຫ້ຜູ້ອອກແຮງງານພັກ 1 ວັນ.<br>- ສາສະໜາ ແລະ ການເຊື່ອຖື: ບໍລິສັດໄດ້ເຜີຍແຜ່ໃຫ້ບັນດາພະນັກງານກຳມະກອນທັງໝົດ (ຊາວຫວຽດນາມ) ຮັບຮູ້ ແລະ ນັບຖືຄວາມເຊື່ອທາງສາສະໜາຂອງຊາວທ້ອງຖິ່ນ.(ກົດລະບຽບສະບັບເລກທີ 15/ລບ-ບສ, ລົງວັນທີ 10/07/2023 ວ່າດ້ວຍການເຄົາລົບສິດຂອງຊຸມຊົນໃນພື້ນທີ່ທີ່ບໍລິສັດດຳເນີນ | - ສຳພາດໂດຍຮູບແບບສົ່ງເອກະສານສອບຖາມກັບຜູ້ຕາງໜ້າອຳນາດການປົກຄອງທ້ອງຖິ່ນ;<br>- ສຳພາດໂດຍກົງຫຼືສົ່ງເອກະສານສອບຖາມກັບອົງການຈັດຕັ້ງຮັບຜະດຊອບວັດທະນະທຳ,ຂໍ້ມູນຂ່າວສານທ້ອງຖິ່ນ;<br>- ແລກປ່ຽນ, ສຳພາດໂດຍກົງກັບຜູ້ຕາງໜ້າອຳນາດການປົກຄອງບ້ານ.<br>- ແລກປ່ຽນໂດຍກົງກັບເຖົ້າແກ່ແນວໂຮມບ້ານ;<br>- ສຳພາດມີການຄັດເລືອກເອົາຕົວແທນບັນດາເຜົ່າພື້ນເມືອງທີ່ເປັນຜູ້ອອກແຮງງານລາວ ໃນບໍລິສັດ;<br>- ປະສານສົມທົບໂຄສະນາໃນກອງປະຊຸມເພື່ອເຜີຍແຜ່ນະໂຍບາຍຂອງທ້ອງຖິ່ນ. |

| ລດ | ຊົນເຜົ່າ | ພາສາ | | ສາດສະໜາ/ການເຊື່ອຖື | ປະເພນີດ້ານການປູກຝັງ | ເອກະລັກການນຸ່ງຖື | ຮີດຄອງປະເພນີ | ວິທີການເຂົ້າເຖິງຮັບປະກັນເຂົ້າຄວາມສອດຄ່ອງກັບວັດທະນະທຳຊົນເຜົ່າ | ວິທີການເຂົ້າເຖິງ ສຳພາດ |
|---|---|---|---|---|---|---|---|---|---|
| | | ພາສາເວົ້າ | ພາສາຂຽນ | | | | | | |
| | | | | | | | | ກິດຈະການ)ໃຫ້ພະນັກງານ ກຳມະກອນຂອງບໍລິສັດ. ພ້ອມກັນນັ້ນຍັງໄດ້ລົງໃນເວັບໄຊເປັນ 2 ພາສາຄື: ລາວ ແລະ ຫວຽດນາມ.<br>- ຮີດຄອງປະເພນີການປູກຝັງ: ບໍລິສັດຮັບປະກັນຈະບໍ່ລະເມີດຫຼືມີຂໍ້ຂັດແຍ່ງກ່ຽວກັບທີ່ດິນ ແລະ ໄຮ່ນາຂອງປະຊາຊົນທ້ອງຖິ່ນ ແລະບໍ່ສົ່ງຜົນກະທົບຕໍ່ການເຄື່ອນໄຫວປູກຝັງຂອງເຂົາເຈົ້າ.(ກົດລະບຽບສະບັບເລກທີ 19/ລບ-ບສ, ລົງວັນທີ 08/04/2023). | |

*ປາກເຊ, ວັນທີ 19 ເດືອນ 11 ປີ 2024*

**ຜູ້ສັງລວມ**

**ຜູ້ອຳນວຍການບໍລິສັດ**

ກະຊວງ ກະສິກຳ ແລະ ປ່າໄມ້ ບໍລິສັດ ດັກລັກ ຣັບເບີ ຈຳກັດ DAKLAK RUBBER CO.,LTD ແຂວງ ຈຳປາສັກ

**ຈັນສຸກ ໄຊຍະສິດ**

**ຫວຽນ ດຶກ ຫັ້ນ**

**Nguyen Duc Hanh**